ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທະນາຄານແຫ່ງ ສປປ ລາວ ຈັດຝຶກອົບຮົມ ການນຳໃຊ້ເຄື່ອງຈັກຄັດໄຈ້ທະນະບັດ ໃຫ້ແກ່ພະນັກງານ



ໃນຕອນເຊົ້າຂອງວັນທີ 2 ມີນາ 2018 ຜ່ານມາ, ທະນາຄານແຫ່ງ ສປປ ລາວ ຮ່ວມກັບ ບໍລິສັດ ເອັນພີ ເອກິບເມັນ ໄດ້ຈັດຕັ້ງການຝຶກອົບຮົມ ການນຳໃຊ້ເຄື່ອງຈັກຄັດໄຈ້ເງິນ ແລະ ການບຳລຸງຮັກສາຂັ້ນພື້ນຖານຂຶ້ນ ໂດຍການໃຫ້ກຽດເຂົ້າຮ່ວມ ແລະ ກ່າວເປີດພິທີ ຂອງທ່ານ ສີວິໄລ ພົມມະຈັກ ຫົວໜ້າກົມເງິນຕາ, ທະນາຄານແຫ່ງ ສປປ ລາວ ພ້ອມນີ້, ກໍ່ມີຄະນະພະນັກງານ ແລະ ວິຊາການທີ່ຮັບຜິດຊອບວຽກງານກ່າວພາຍໃນ ທຫລ ແລະ ສາຂາ ທຫລ 5 ພາກ ພ້ອມດ້ວຍຜູ້ບໍລິຫານ ແລະ ຊ່ຽວຊານຈາກບໍລິສັດ ເອັນພີ ເອກິບ ເຂົ້າຮ່ວມ.

ການຈັດຕັ້ງການຝຶກອົບຮົມການນຳໃຊ້ເຄື່ອງຈັກຄັດໄຈ້ທະນະບັດໃນຄັ້ງນີ້ ໄດ້ດຳເນີນໄປເປັນເວລາ 1 ວັນ ເຊິ່ງຜູ້ເຂົ້າຮ່ວມໄດ້ຮຽນຮູ້ການນຳໃຊ້ເຄື່ອງຈັກຄັດໄຈ້ເງິນ ຍີ່ຫໍ້ Glory ລຸ້ນ UW-600 ແລະ ລຸ້ນ USF-100 ເປັນຕົ້ນແມ່ນການປິດ-ເປີດ ແລະ ອຸ່ນເຄື່ອງ, ການຕັ້ງຄ່າຄວບຄຸມການນຳໃຊ້, ການປ້ອນຂໍ້ມູນ ແລະ ການແຍກປະເພດທະນະບັດ, ພ້ອມນັ້ນ, ຍັງໄດ້ຮຽນຮູ້ການບຳລຸງຮັກສາ ແລະ ສ້ອມແປງເຄື່ອງຈັກຂັ້ນພື້ນຖານ ຈາກຊ່ຽວຊານຂອງບໍລິສັດ ທີ່ມີຄວາມຊຳນານໃນການນຳໃຊ້ ແລະ ສ້ອມແປງເຄື່ອງຈັກປະເພດດັ່ງກ່າວ.





ການຈັດຝຶກອົບຮົມຄັ້ງນີ້ ແມ່ນນອນຢູ່ພາຍໃຕ້ຂອບຂອງສັນຍາການບໍລິການລະຫວ່າງ ທຫລ ແລະ ບໍລິສັດເອັນພີ ເອກິບເມັນ ທີ່ໄດ້ສະໜອງ ແລະ ອຳນວຍຄວາມສະດວກໃນການຝຶກອົບຮົມໃຫ້ພະນັກງານຂອງທະນາຄານທີ່ຈະສາມາດນຳໃຊ້ເຄື່ອງຈັກດັ່ງກ່າວໄດ້ຢ່າງຄ່ອງແຄ້ວ ແລະ ສາມາດແກ້ໄຂບັນຫາສະເພາະໜ້າໃນກໍລະນີເຄື່ອງຈັກມີການຂັດຂ້ອງ ແລະ ບັນຫາອື່ນໆທີ່ຕິດພັນ.

**# ຂ່າວ-ພາບ : ສົມອົກ ເດນຄຳແພງ**

**ຢູ່ເມືອງລາວ ໃຊ້ເງິນກີບລາວ ຊາດລາວກ້າວໄປ**